**ກາານບ້ານບົດທີ 5 ພາກຕົ້ນ**

# ໂປໂລແວ່ຢູ່ເບຣອຍອາ ເມື່ອເດີນທາງໄປອາແຖນ

**1** ໃນບົດຮຽນນີ້ເຮົາຈະຮຽນເລື່ອງຂອງໂປໂລທີ່ໄປເບຣອຍອາ. ພີ່ນ້ອງໃນເມືອງເບຣອຍອາມີສິ່ງທີ່ໜ້າປະທັບໃຈ ເພາະສອງສາເຫດຄື:

ເຂົາຄົ້ນເບິ່ງພະຄຳພີທຸກວັນ

ເຂົາຊ່ວຍໂປໂລອອກໄປແຄມທະເລຈຶ່ງຈະໄປອາແຖນໄດ້.

ກ. ຮູບໃດຕໍ່ໄປນີ້ສະແດງເຖິງການຄົ້ນເບິ່ງໃນພະຄຳພີ ຮູບເທິງຫຼືຮູບລຸ່ມ? ______________

ຂ. ຮູບໃດສະແດງເຖິງທີ່ເຂົາຊ່ວຍໂປໂລໜີໄປກຸງອາແຖນ? ________________________








## ພີ່ນ້ອງຊາວເບຣອຍອາຄົ້ນເບິ່ງພະຄໍາພີທຸກວັນ

(ກຈກ 17:10-12)

**2** ກ. ຕາມທີ່ທ່ານຮຽນມາກ່ອນ ເມື່ອໂປໂລເດີນທາງໄປປະກາດພະທໍາຕໍ່ ລູກາແລະຕີໂມທຽວລໍຖ້າສອນ ລູດສະຕຽນໃໝ່ໃນເມືອງໃດ? ________________________________

ຂ. ແມ່ນໃຜອອກໄປຍັງເມືອງເບຣອຍອາພ້ອມກັບໂປໂລ? (ກຈກ 17:10) ___________

ຄ. ເມື່ອໂປໂລຈະໜີຈາກເບຣອຍອາ ແມ່ນຜູ້ໃດທີ່ເປັນໝູ່ກັບຊີລາຕໍ່ໄປ? (ກຈກ 17:14)

________________________________________________________________

ງ. ດັ່ງນັ້ນປາກົດວ່າ ໂປໂລແລະຊີລາມາເບຣອຍອາກ່ອນ ແລ້ວທີຫຼັງຕີໂມທຽວເດີນທາງຈາກໃສໄປ ຮ່ວມກັບເຂົາ? ____________________________________________

**3** ກ. ມາເຖິງເມືອງເບຣອຍອາແລ້ວ ເຂົາໄປເທດສະໜາຢູ່ໃສ? (ກຈກ 17:10)

________________________________________________________________

ຂ. ພວກຢິວໃນເມືອງເບຣອຍອາ ມີຈິດໃຈສູງສົ່ງ ເພາະມີໃຈຢ່າງໃດເພື່ອຮັບເອົາພະທໍາ? (ກຈກ 17:11) ____________________________________________

ຄ. ເຂົາຄົ້ນເບິ່ງຫຍັງທຸກວັນ? (ກຈກ 17:11) _________________________________

ງ. ເຫດສັນນັ້ນ ມີຫຼາຍຄົນໄດ້ຮັບຫຍັງ? (ກຈກ 17:12) _________________________

**4** ໃຫ້ກັບໄປເບິ່ງຮູບໜ້າ 8. ຕົວອັກສອນໃດສະແດງເຖິງຊາວເບຣອຍອາທີ່ຄົ້ນເບິ່ງພະຄໍາພີທຸກວັນ? _______________________________________________________

## ເຂົາຊ່ວຍໂປໂລອອກໄປແຄມທະເລ

(ກຈກ 17:13-15)

**5** ອີກເທື່ອໜຶ່ງ ໂປໂລຕ້ອງໜີໄປ. ຊາວຢິວຈາກເມືອງໃດທີ່ໄລ່ຕາມ? ________________

**6** ກ. ແມ່ນສອງຄົນໃດທີ່ຢູ່ເບຣອຍອາກັບໂປໂລ? (ກຈກ 17:14) ___________________

ຂ. ເມື່ອໂປໂລໄປແລ້ວ ຊີລາແລະຕີໂມທຽວເຮັດຫຍັງ? (ກຈກ 17:14) ______________

ຄ. ພີ່ນ້ອງຈາກເບຣອຍອານໍາໂປໂລໄປເຖິງໃສ? (ກຈກ 17:15) __________________

**7** ກ. ເມື່ອຕ້ອງໜີຈາກເບຣອຍອາ ພວກພີ່ນ້ອງໄດ້ໃຫ້ໂປໂລອອກໄປເຖິງໃສກ່ອນ? (ກຈກ 17:14)____________________________________________________

ຂ. ຈາກນັ້ນ ເຂົາລົງເຮືອໄປໃສ? (ກຈກ 17:15) ____________________________

ຄ. ແຂວງໃດ? ________________________________________________________

ງ. ພີ່ນ້ອງລູດສະຕຽນຈາກບ່ອນໃດຍັງຢູ່ນໍາ? (ກຈກ 17:15) ____________________

**8** ກ. ບາດນີ້ ເຮົາຈະກັບໄປອ່ານຈາກຈົດໝາຍຂອງໂປໂລຈຶ່ງຈະຮູ້ເລື່ອງຢ່າງລະອຽດ. ເມື່ອໂປ ໂລອອກຈາກເບຣອຍອາແລ້ວ ແທນທີ່ຈະໄປອາແຖນເພິ່ນຢາກໄປໃສ? (1 ທຊນ 2:17-18) ______________________________

ຂ. ແຕ່ແມ່ນໃຜມາຂັດຂວາງໄວ້? ______________________________

ຄ. ເລື່ອງນັ້ນ ບໍ່ແມ່ນລູກາ ລາຍງານໃນພະທຳກິດຈະການ. ແມ່ນໂປໂລເອງເປັນຜູ້ລາຍງານໃນຈົດໝາຍເຖິງໃຜ? ______________________________

**9** ຊາຕານໃຊ້ຄົນຢິວຈາກເມືອງໃດໃນການຂັດຂວາງນັ້ນ? (ກຈກ 17:13) ______________

*ເຫັນວ່າການລາຍງານຂອງລູກາ ໃນພະທຳກິດຈະການເຂົ້າກັບຈົດໝາຍຂອງໂປໂລໄດ້.*

**10** ກ. ເນື່ອງຈາກທີ່ໂປໂລກັບໄປເທຊະໂລນິກບໍ່ໄດ້ ເພິ່ນລົງໄປກຸງໃດ? (ກຈກ 17:15)

______________________________

ຂ. ກຸງນັ້ນຢູ່ໃນແຂວງໃດ? ______________________________

*ກຸງອາແຖນນັ້ນສວຍງາມຫຼາຍ. ແຕ່ກ່ອນເຄີຍເປັນນະຄອນຫຼວງຂອງຈັກກະພັດກຼີກ ແລະເປັນສູນກາງຂອງສິລະປະແລະວັດທະນະທຳກຼີກ.*

ຄ. ແມ່ນຄຼິດສະຕຽນຈາກເມືອງໃດແຂວງໃດທີ່ນຳໂປໂລໄປອາແຖນ? ______________

______________________________

*ຄືໂປໂລເຂົ້າແຂວງໃໝ່!*

**11** ໃຫ້ທ່ານເບິ່ງແຜນທີ່ນີ້ດີ ໆ ແລະຮູບດ້ວຍ




ກ. ໂປໂລຮັບຂ່າວຈາກພີ່ນ້ອງໃນເມືອງເທຊະໂລນິກມາໂດຍໃຜ? ____________________

ຂ. ຂ່າວນັ້ນດີ ຫຼືບໍ່ດີ? ____________________________________________

*ຈົ່ງຮັບພິຈາລະນາ*

*ໃຫ້ສັງເກດທີ່ໂປໂລເປັນຫ່ວງພີ່ນ້ອງໃນເມືອງເທຊະໂລນິກ ແລ້ວເອົາໂປໂລມາເປັນຕົວຢ່າງຕໍ່ເຮົາ. ພວກເຮົາຄວນເປັນຫ່ວງເລື່ອງຄຼິດສະຕຽນໃຫມ່ດ້ວຍ.*

| ຄຳຕອບ: | |
|---|---|
| **1** | *ກ. ຮູບເທິງ ຂ. ຮູບລຸ່ມ* |
| **2** | *ກ. ຟີລິບປອຍ ຂ. ຊີລາ ຄ. ຕີໂມທຽວ ງ. ຈາກຟີລິບປອຍ* |
| **3** | *ກ. ໂຮງທຳມະເທດສະໜາ ຂ. ໃຈເຫຼື້ອມໃສ ຄ. ຄົ້ນເບິ່ງພະຄຳພີ ງ. ຮັບເຊື່ອ* |
| **4** | *ຮູບ ຄ* |
| **5** | *ຈາກເທຊະໂລນິກ* |
| **6** | *ກ. ຊີລາແລະຕີໂມທຽວ. ຂ. ເຂົາຍັງພັກຢູ່ເບຣອຍອາ. ຄ. ກຸງອາແຖນ.* |
| **7** | *ກ. ແຄມທະເລ ຂ. ກຸງອາແຖນ ຄ. ແຂວງອະຂາຢາ ງ. ເບຣອຍອາ* |
| **8** | *ກ. ຢາກກັບໄປເທຊະໂລນິກ ຂ. ຊາຕານ ຄ. ເທຊະໂລນິກສະບັບຕົ້ນ* |
| **9** | *ຈາກເທຊະໂລນິກ* |
| **10** | *ກ. ໄປກຸງອາແຖນ ຂ. ອະຂາຢາ ຄ. ເມືອງເບຣອຍອາແຂວງມາເກໂດເນຍ* |
| **11** | *ກ. ຕີໂມທຽວ ຂ. ຂ່າວດີ* |

ການບ້ານບົດທີ 5 ພາກປາຍ

# ໂປໂລໃນກຸງອາແທນ

(ກຈກ 17:15-34)

## ໂປໂລຝາກຄວາມໄປຫາຊີລາແລະຕີໂມທຽວຈາກກຸງອາແທນ

**1** ໃຫ້ອ່ານ ກຈກ 17:15

ກ. ໂປໂລມາເຖິງກຸງທີ່ເປັນນະຄອນຫຼວງຂອງຈັກກະພັດກຼີກ ໃນສະໄຫມບູຮານ ຄືກຸງໃດ? (ກຈກ 17:15) ____________________

ຂ. ກຸງນັ້ນຢູ່ໃນແຂວງໃດ? ____________________

ຄ. ໂປໂລຝາກຄວາມໃຫ້ຊີລາແລະຕີໂມທຽວເຮັດຫຍັງ? ____________________

ງ. ຝາກໂດຍມືຂອງພີ່ນ້ອງເມືອງໃດ? ____________________

ຈ. ເມືອງນັ້ນຢູ່ໃນແຂວງໃດ? ____________________

**2** ໃຫ້ອ່ານ 1 ທຊນ 3:1-6

ກ. ໂປໂລຢາກຮູ້ຂ່າວຈາກພີ່ນ້ອງໃນເທຊະໂລນິກຈົນອົດບໍ່ໄດ້ ດັ່ງນັ້ນເພິ່ນໃຫ້ພີ່ນ້ອງປະເພິ່ນໄວ້ໃນກຸງ ໃດ? (1 ທຊນ 3:1) ____________________

ຂ. ເພິ່ນຝາກຄວາມໃຫ້ສອງຄົນໃດມາຫາ? (ກຈກ 17:15) ____________________

ຄ. ເຖິງໂປໂລຢາກໃຫ້ເຂົາມາຮ່ວມກໍຕາມ ແຕ່ເພິ່ນຍັງໃຊ້ໃຜໄປຊູໃຈພີ່ນ້ອງກ່ອນ? (1 ທຊນ 3:2) ____________________

ງ. ຊູໃຈພີ່ນ້ອງໃນເມືອງໃດ? ____________________

ຈ. ລູກາບໍ່ລາຍງານເລື່ອງນີ້ໃນພະທຳກິດຈະການ ດັ່ງນັ້ນມີຈົດຫມາຍໃດທີ່ບັນທຶກເລື່ອງນີ້?

____________________

**3** ຖ້າເຮົາຮຽນຮູ້ເລື່ອງນີ້ໃນຈົດຫມາຍເທຊະໂລນິກ ເຮົາຮູ້ເຫດທີ່ຕີໂມທຽວຊັກຊ້າໃນການໄປລົມກັບໂປໂລ.

ກ. ຕີໂມທຽວໄປຢ້ຽມຄຼິດສະຕະຈັກໃດກ່ອນ? ____________________

ຂ. ຕີໂມທຽວແລະຊີລາອອກຈາກແຂວງໃດໄປຫາໂປໂລ? (ກຈກ 18:5)

____________________

ຄ. ໃນເວລານັ້ນ ໂປໂລຢູ່ເມືອງໃດ? (ກຈກ 18:1) ____________________

**4** ທວນຄືນ!

ກ. ແມ່ນໃຜທີ່ຟ້າວໄປຢ້ຽມພີ່ນ້ອງໃນເທຊະໂລນິກ? ____________________

ຂ. ກ່ອນທີ່ເຂົາຈະພົບໂປໂລ ໂປໂລອອກຈາກກຸງໃດໄປແລ້ວ? ____________________

ຄ. ໄປເຖິງເມືອງໃດ? ____________________

# ໂປໂລກ່າວຄຳພະຍານໃນກຸງອາແຖນ

(ກຈກ 17:16-21)

**5** ກ. ໃນ ກຈກ 17:16 ເຫັນວ່າໂປໂລລໍຖ້າຊີລາກັບຕີໂມທຽວຢູ່ກຸງໃດ? ________________

ຂ. ໃນກຸງນັ້ນ ເຕັມໄປດ້ວຍພະຫຍັງ? ________________________________________

ຄ. ດັ່ງນັ້ນ ໃຈຂອງໂປໂລເປັນຢ່າງໃດ? ______________________________________

**6** ກ. ໂປໂລປະກາດຂ່າວປະເສີດເລື່ອງໃຜ? (ກຈກ 17:18) _________________________

ຂ. ປະກາດວ່າພະເຢຊູຄືນມາຈາກໃສ? ______________________________________

**7** ໃນກຸງອາແຖນນັ້ນ ໂປໂລປະກາດເລື່ອງພະເຢຊູຄືນມາຈາກຕາຍໃນຫຼາຍບ່ອນ.

ກ. ໃນ ກຈກ 17:17 ໂປໂລປະກາດກັບພວກຢິວແລະຜູ້ທີ່ຍັງຢຳເກງພະເຈົ້າຢູ່ໂຮງໃດ? ____

ຂ. ປະກາດກັບບຸກຄົນທີ່ພົບໃນບ່ອນໃດ? ___________________________________

ຄ. ໃນ ກຈກ 17:19 ເຂົາຈັບໂປໂລແລ້ວພາໄປໃສ? ____________________________

**8** ໃນ 3 ຮູບຕໍ່ໄປນີ້ ເຫັນສາມບ່ອນທີ່ໂປໂລປະກາດພະທຳ:




ກ




ຂ




ຄ

ກ. ໂຮງທຳຫມາຍດ້ວຍດາວ 6 ຫຼ່ຽມ ຢູ່ໃນຮູບໃດ? ____________________________

ຂ. ບ່ອນຊຸມຊົນຄ້າຍຄືກັບຕະຫຼາດ ໃນຮູບໃດ? ______________________________

ຄ. ສະພາຕັ້ງໄວ້ຢູ່ຍອດພູ ຄືຮູບໃດ? ____________________________________

**9** ກຈກ 17:22-31 ກ່າວເລື່ອງທີ່ໂປໂລເທດສະຫນາໃນກຸງອາແຖນ. ເຮົາຈະບໍ່ສຶກສາເລື່ອງຄຳເທດສະຫນານັ້ນເທື່ອ ແຕ່ຈະສຶກສາໃນການລວມກັນ.
ເລື່ອງນັ້ນ ໂປໂລເທດສະຫນາຢູ່ບ່ອນໃດ? (ກຈກ 17:22) ______________________

**10** ໃຫ້ກັບໄປເບິ່ງຮູບຢູ່ຫນ້າ 8. ຮູບໃດສະແດງເຖິງໂປໂລຢູ່ຕໍ່ຫນ້າສະພາອາເລໂອປາໂຄນັ້ນ?

______________________________________________________________

## ຜົນຮັບຂອງຄຳເທດສະຫນານັ້ນ

(ກຈກ 17:32-34)

**11** ກຈກ 17:34 ບອກຊື່ສອງຄົນທີ່ຮັບເຊື່ອໃນເມື່ອໂປໂລເທດສະຫນາ.

ກ. ຄົນໃດເປັນສະມາຊິກສະພາອາເລໂອປາໂຄ? ____________________________

ຂ. ຄົນໃດເປັນຜູ້ຍິງ? ______________________________________________

**12** ກ. ເມື່ອອອກຈາກອາແຖນ ໂປໂລໄປເມືອງໃດ? (ກຈກ 18:1) __________________

ຂ. ຢູ່ໃນແຂວງໃດ? _______________________________________________

ຄ. ເມື່ອຢູ່ເມືອງໂກລິນໂທນັ້ນ ໂປໂລຂຽນຈົດຫມາຍສອງສະບັບໄປເຖິງຄຼິດສະຕະຈັກໃດ?

______________________________________________________________

ຄຳຕອບ:

**1** *ກ. ກຸງອາແຖນ ຂ. ອະຊາຢາ ຄ. ມາຫາໂປໂລ ງ. ເມືອງເບຣອຍອາ*
*ຈ. ມາເກໂດເນຍ*

**2** *ກ. ກຸງອາແຖນ ຂ. ຊີລາແລະຕີໂມທຽວ ຄ. ຕີໂມທຽວ ງ. ເທຊະໂລນິກ*
*ຈ. ເທຊະໂລນິກ*

**3** *ກ. ເທຊະໂລນິກ ຂ. ຈາກແຂວງມາເກໂດເນຍ ຄ. ໂກລິນໂທ*

**4** *ກ. ຕີໂມທຽວ ຂ. ອາແຖນ ຄ. ໂກລິນໂທ*

**5** *ກ. ອາແຖນ ຂ. ພະທຽມ ຄ. ເດືອດຮ້ອນເຄືອງໃຈ*

**6** *ກ. ພະເຢຊູ ຂ. ຈາກຄວາມຕາຍ*

**7** *ກ. ໂຮງທຳ ຂ. ໃນບ່ອນຊຸມຊົນ ຄ. ໄປຍັງສະພາ*

**8** *ກ. ຮູບ "ຂ" ຂ. ຮູບ "ຄ" ຄ. ຮູບ "ກ"*

**9** *ສະພາ*

**10** *ຮູບ "ງ"*

**11** *ກ. ດີໂອນີຊີໂອ ຂ. ດາມາລີ*

**12** *ກ. ໂກລິນໂທ ຂ. ອະຊາຢາ ຄ. ເທຊະໂລນິກ*

ໃນການປະຊຸມບົດທີ 5

# ໂປໂລເທດສະໜາໃຫ້ຜູ້ມີລະດັບສູງຟັງໃນກຸງອາແຖນ

(ກຈກ 17:16-34)

**1** ກຸງອາແຖນ ເປັນສູນກາງຂອງວັດທະນະທຳກຼີກ ແລະເປັນສູນກາງຂອງນັກປາດ ສູນການຂອງການ ສຶກສາແລະສາສະໜາກຼີກ. ທີ່ໂປໂລຈະກ່າວພະຄຳຂອງພະເຈົ້າຕໍ່ສະພານັ້ນເປັນໂອກາດດີທີ່ສຸດ.

ກ. ເມື່ອຢູ່ໃນກຸງອາແຖນ ໂປໂລມີຄວາມເດືອດຮ້ອນເຄືອງໃຈ ເພາະເຫັນເມືອງນັ້ນເຕັມໄປດ້ວຍພະ ທຽມ. ໃນຂະນະດຽວກັນນັ້ນ ໂປໂລລໍຖ້າໃຜມາ? (ກຈກ 17:15-16)

________________________________________________________

ຂ. ຫຼັງຈາກນັ້ນໂປໂລເດີນທາງໄປໃສ? (ກຈກ 18:1) ____________________________

ຄ. ຊີລາແລະຕີໂມທຽວມາຮ່ວມກັບໂປໂລ (ໃນ ກຈກ 18:5) ເຂົາມາຈາກແຂວໃດ?

________________________________________________________

*ໃຫ້ອ່ານ 1 ເທຊະໂລນິກ 3:1-5. ໂປໂລເປັນຫ່ວງຄຼິດສະຕຽນໃຫມ່ໃນເມືອງເທຊະໂລນິກຫຼາຍ. ພວກເຮົາສົມຄວນເປັນຫ່ວງພີ່ນ້ອງຄຼິດສະຕຽນຄົນອື່ນອີກເຫມືອນກັນ.*

**2** ທຳມະດາຄົນເຮົາບໍ່ຢາກຢູ່ຜູ້ດຽວ ມັກມີພີ່ນ້ອງຫຼືຫມູ່ເພື່ອນຢູ່ນຳ.

ກ. ເມື່ອພີ່ນ້ອງຄຼິດສະຕຽນຈາກເມືອງເບຣອຍອາສົ່ງໂປໂລໄປກຸງອາແຖນ ເຂົາກັບໄປຫຼືຢູ່ປະຈຳນຳ ໂປໂລ? (ກຈກ 17:15) ______________________________________

ຂ. ຢູ່ຜູ້ດຽວຢ່າງນັ້ນ ເພິ່ນດີໃຈບໍ່? (ກຈກ 17:16) ________________________________

**3** ເຖິງວ່າຢູ່ໂດດດ່ຽວໃນກຸງໃຫຍ່ກໍຕາມ ໂປໂລຍັງບໍ່ຢ້ານ. ໃນ ກຈກ 17:17 ໂປໂລເຮັດຫຍັງ?

________________________________________________________

*ເຄືອງໃຈກໍຕາມ ຢູ່ໂດດດ່ຽວກໍຕາມ ໂປໂລຍັງປະກາດພະທຳ! ກຸງອາແຖນເປັນທີ່ຈະເລີນປານນັ້ນກໍຕາມ ແຕ່ຍັງເຕັມໄປດ້ວຍພະທຽມ ໂປໂລມາປະກາດຂ່າວປະເສີດເລື່ອງພະເຢຊູ ທີ່ຄືນ ມາຈາກຕາຍໃຫ້ເຂົາຟັງ!*

**4** ຕາມຮູບຕໍ່ໄປນີ້ ໂປໂລປະກາດໃນ 3 ບ່ອນ (ກຈກ 17:17-19)




ອັກສອນ "ນ" ຫມາຍເຖິງບ່ອນໃດ? ______________________

ອັກສອນ "ບ" ຫມາຍເຖິງບ່ອນໃດ? ______________________

ອັກສອນ "ປ" ຫມາຍເຖິງບອ່ນໃດ? ______________________

**5** ກ. ໃນກຸງອາແຖນໂປໂລປະກາດເລື່ອງຫຍັງ? (ກຈກ 17:18) ______________________

ຂ. ປະກາດໃນ 3 ບ່ອນໃດ? ______________________

**6** ໃຫ້ອ່ານ ກຈກ 17:18

ກ. ນັກປາດພວກໃດທີ່ມາພົບໂປໂລ? ______________________

- *ຫມາຍເຫດ: ພວກເອປີກູລຽວ ພະຍາຍາມຫາຄວາມສຸກໂດຍທາງປ່ອຍຕົວໄປຕາມໃຈ ແຕ່ພວກຊະໂຕອີໂກຫາຄວາມສຸກໂດຍການປະຕິເສດຄວາມຕ້ອງການຂອງຕົນ.*

ຂ. ພວກນັກປາດເຫຼົ່ານັ້ນ ຈະເປັນຄົນທີ່ມີການສຶກສາຫຼາຍຫຼືນ້ອຍ? ______________________

**7** ໃນ ກຈກ 17:18-23 ບັນຍາຍເລື່ອງຄົນຢູ່ໃນກຸງອາແຖນ

ກ. ເປັນຄົນທີ່ສົນໃຈຢາກໄດ້ຄວາມຮູ້ຫຼືບໍ່? ______________________

ຂ. ເຂົາສົນໃຈການຄ້າຫຼືສາສະຫນາຫຼາຍກວ່າ? ______________________

ຄ. ເຂົາຮູ້ດີເລື່ອງພະເຈົ້າທ່ຽງແທ້ຫຼືບໍ່? ______________________

**8** ກ. ສອງຂໍ້ໃດແຈ້ງວ່າເຂົາມັກຖາມເລື່ອງສາສະຫນາ? ______________________

ຂ. ຂໍ້ໃດບອກວ່າເຂົາເປັນຜູ້ປະຕິບັດພະຕ່າງ ໆ ຢ່າງເຄັ່ງຄັດ? ______________________

ຄ. ຂໍ້ໃດອ້າງເຖິງພະເຈົ້າທີ່ເຂົາບໍ່ຮູ້ຈັກ? ______________________

**9** ເຫັນວ່າຄົນໃນກຸງອາແຖນນັ້ນ ສົນໃຈຢາກໄດ້ຄວາມຮູ້ ເຂົາປະຕິບັດພະຕ່າງ ໆ ຢ່າງເຄັ່ງຄັດ ແຕ່ ບໍ່ເຂົ້າໃຈເລື່ອງພະຜູ້ເປັນເຈົ້າອົງທ່ຽງແທ້. ຢ່າງນັ້ນເປີດໂອກາດດີໃຫ້ໂປໂລກ່າວເລື່ອງພະຜູ້ເປັນ ເຈົ້າໃຫ້ແກ່ເຂົາ. ໃຫ້ອ່ານ ກຈກ 17:24-31

ກ. ໃນ ກຈກ 17:24-31 ນັ້ນ ຂໍ້ໃດບອກວ່າພະເຈົ້າສ້າງໂລກ? ____________________

ຂ. ຂໍ້ໃດບອກວ່າພະອົງເປັນຜູ້ປະທານຊີວິດ? ________________________________

ຄ. ຂໍ້ໃດບອກວ່າພະອົງສ້າງມະນຸດທຸກຊາດໃຫ້ເກີດມາຈາກມະນຸດຄົນດຽວ? ___________

ງ. ຂໍ້ໃດບອກວ່າ ຊົງສ້າງມະນຸດເພື່ອເຂົາຈະໄດ້ສະແຫວງຫາພະເຈົ້າ? _______________

ຈ. ຂໍ້ໃດບອກຊໍ້າວ່າ ພະອົງບໍ່ຢູ່ໄກຈາກເຮົາທຸກຄົນ? ____________________________

ສ. ຂໍ້ໃດບອກວ່າພວກເຮົາເປັນເຊື້ອສາຍຂອງພະອົງ? ____________________________

ຊ. ຂໍ້ໃດບອກວ່າບໍ່ໃຫ້ຄວັດຮູບພະເຈົ້າໂດຍ ຄຳ ເງິນ ຫຼື ຫີນ? _____________________

ຍ. ຂໍ້ໃດບອກວ່າ ພະເຈົ້າຈະໃຫ້ຖິ້ມໃຈເກົ່າເອົາໃຈໃໝ່? ________________________

ດ. ຂໍ້ໃດບອກວ່າພະອົງຈະພິພາກສາໂລກ? __________________________________

ຕ. ຂໍ້ໃດບອກວ່າຜູ້ທີ່ຈະພິພາກສາໂລກໄດ້ຄືນມາຈາກຕາຍ? _____________________

**10** ເຖິງວ່າຜູ້ຟັງຄຳເທດສະໜາຂອງໂປໂລເປັນນັກປາດ ແລະມີຄວາມຮູ້ສູງກໍຕາມ ແຕ່ເຂົາບໍ່ຮູ້ເລື່ອງ ພະຜູ້ເປັນເຈົ້າ. ດັ່ງນັ້ນ ໂປໂລຈຶ່ງກ່າວແຕ່ເລື່ອງຂ່າວປະເສີດຂອງພະເຢຊູ. ຖ້າທ່ານມີໂອກາດ ກ່າວເລື່ອງພະເຢຊູໃຫ້ເຈົ້ານາຍ ຫຼືອາວຸໂສ ຫຼືຜູ້ທີ່ມີຄວາມຮູ້ສູງ ທ່ານຈະກ່າວຢ່າງໃດ?

_____________________________________________________________________

_____________________________________________________________________

**11** ເມື່ອໂປໂລປະກາດພະທຳໃຫ້ເຂົາຟັງໃນ ກຈກ 17:32-34 ຄົນທີ່ຈະຄິດຢ່າງໃດກໍມີ. (ໃຫ້ຕື່ມຄວາມທີ່ຂາດ)

ກ. ລາງຄົນກໍ _______________________________________________________

ຂ. ລາງຄົນເວົ້າວ່າ "____________________________________ ."

ຄ. ມີຊາຍລາງຄົນທີ່ຕິດພັນຢູ່ກັບໂປໂລແລະ _____________ .

**12** ເບິ່ງຊາວກຸງອາແຖນນັ້ນ ມີນັກປາດຫຼາຍຄົນທີ່ບໍ່ສົນໃຈໃນຂ່າວປະເສີດຂອງພະເຢຊູ. ຫຼາຍເທື່ອເຫັນວ່າ ຄົນທີ່ມີການສຶກສາສູງ ຄົນທີ່ຮັ່ງມີ ແລະຄົນທີ່ຖືຕົວວ່າ ເປັນຄົນສົນທຳດ້ານສາສະໜາ ອື່ນ ໆ ບໍ່ສົນໃຈຟັງຂ່າວປະເສີດ. ໃນກຸງອາແຖນມີຫຼາຍຄົນທີ່ເປັນຢ່າງນັ້ນບໍ່ຢາກຮັບເຊື່ອ ແຕ່ເມື່ອໂປໂລ ໄປເມືອງໂກລິນໂທ ເຫັນວ່າມວນຊົນທຳມະດາທີ່ບໍ່ມີການສຶກສາສູງກໍຮັບເຊື່ອໃນພະອົງຫຼາຍ.

ກ. 1 ກລທ 1:18-20 ກ່າວເລື່ອງຄົນມີຖານະສູງ ຫຼືມວນຊົນທຳມະດາ? ______________

_____________________________________________________________________

ຂ. ເຂົາເຫັນວ່າເລື່ອງໄມ້ກາງແຂນເປັນເລື່ອງຢ່າງໃດ? (ຂໍ້ 18) ____________________

ຄ. ປັນຍາແລະຄວາມສະຫຼາດຂອງເຂົາຈະກາຍເປັນຢ່າງໃດ? (ຂໍ້ 19) _______________

ງ. 1 ກລທ 1:26-31 ກ່າວເລື່ອງຄົນມີຖານະສູງ ຫຼືຄົນທຳມະດາ? ________________

ຈ. ພະເຈົ້າເລືອກເອົາຄົນທີ່ມະນຸດຖືວ່າໂງ່ແລະອ່ອນກຳລັງ ເພື່ອໃຫ້ຄົນສະຫຼາດແລະຄົນທີ່ມີກຳລັງຖືກ ຫຍັງ? (ຂໍ້ 27) ________________________________________

ສ. ພະເຈົ້າເລືອກເອົາສິ່ງທີ່ມະນຸດຖືວ່າຕໍ່າຕ້ອຍ ແລະດູໝິ່ນ ແລະບໍ່ສຳຄັນ ເພື່ອທຳລາຍ ຫຍັງ? (ຂໍ້ 28) ________________________________________________

ຊ. ບໍ່ໃຫ້ມະນຸດຈັກຄົນອວດຕົວໄດ້. ຜູ້ອວດອ້າງນັ້ນຈິ່ງເອົາໃຜມາອວດອ້າງ? (ຂໍ້ 29-31)

________________________________________________________________

| |
|---|
| ໃຫ້ທ່ານຂຽນຄຳວ່າ "ຢ່າງຊາວອາແຖນ" ກ່ອນ 1 ກລທ 1:18 ເພື່ອແຈ້ງວ່າ ຄຳນັ້ນບັນລະຍາຍເລື່ອງຄົນຢ່າງນັ້ນ. |

**13** ໂປໂລວັດເບິ່ງຄົນສະຫຼາດທີ່ບໍ່ຢາກຮັບເຊື່ອໃນພະອົງ ແລ້ວຍົກມາປຽບກັບຄົນທຳມະດາທີ່ຮັບເຊື່ອໃນ ພະອົງຫຼາຍຄົນ. ໃນທີ່ສຸດເພິ່ນລົງຄວາມເຫັນໃນ 1 ກລທ 1:21-25.

ກ. ໃນ ຂໍ້ 21 ເຫັນວ່າມະນຸດບໍ່ສາມາດຮູ້ຈັກໃຜດ້ວຍປັນຍາຂອງຕົນ? _______________

ຂ. ພະເຈົ້າໂຜດຄົນທີ່ເຊື່ອໃຫ້ພົ້ນດ້ວຍຫຍັງ? ________________________________

ຄ. ຄົນຖານະສູງໃນໂລກຖືວ່າຄຳເທດສະໜານັ້ນເປັນຢ່າງໃດ? __________________

ງ. ໃນ ຂໍ້ 23 ຄົນຕ່າງຊາດ(ບໍ່ເປັນຢິວ)ຖືວ່າເລື່ອງໄມ້ກາງແຂນເປັນຢ່າງໃດ? __________

ຈ. ໃນ ຂໍ້ 25 ຄວາມໂງ່ຂອງພະເຈົ້າສະຫຼາດກວ່າຫຍັງ? ________________________

**14** ບໍ່ແມ່ນວ່າພະເຈົ້າຫ້າມເລື່ອງການສຶກສາ ແຕ່ປັນຍາຂອງພະເຈົ້າຕ່າງກັນກັບປັນຍາຂອງມະນຸດ. ໃຫ້ອ່ານ 1 ກລທ 2:6-10

ກ. ໃນ ຂໍ້ 6 ໂປໂລກ່າວດ້ວຍສະຕິປັນຍາໃນຖ້າມກາງຄົນທີ່ແກ່ແລ້ວ ບໍ່ແມ່ນດ້ວຍປັນຍາຂອງຄົນສະ ສະໄໝໃດ? ____________________________________________

ຂ. ພະສັນຍານັ້ນ ເປັນທີ່ເຊື່ອງໄວ້ຫຼືເປີດເຜີຍ? (ຂໍ້ 7) _________________________

ຄ. ພະເຈົ້າກຳນົດພະປັນຍານັ້ນໄວ້ກ່ອນຫຍັງ (ຂໍ້ 7) ___________________________

ງ. ຄົນທີ່ຂ້າພະເຢຊູຂາດປັນຍາໃດ? (ຂໍ້ 8) ____________________________________

ຈ. ມີສິ່ງໃດທີ່ຕາບໍ່ເຫັນ ຫູບໍ່ໄດ້ຍິນ ແລະມະນຸດເຮົາຄຶດບໍ່ອອກ? (ຂໍ້ 9) ______________

________________________________________________________________

ສ. ສິ່ງເຫຼົ່ານັ້ນ ພະເຈົ້າສະແດງໃຫ້ເຮົາເຫັນຢ່າງໃດ? (ຂໍ້ 10) _____________________

**15** ນອກຈາກພະວິນຍານຈະຊ່ວຍ ບໍ່ມີໃຜທີ່ຈະເຂົ້າໃຈເລື່ອງພະເຈົ້າແລະເລື່ອງຄວາມລອດໄດ້. ພະວິນຍານຂອງພະເຈົ້າພ້ອມໃຈທີ່ຈະຊ່ວຍຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່ແລ້ວສະແຫວງຫາ ພະອົງ. ແຕ່ເຖິງຈະຮ່ຳຮຽນສຶກສາ ຫຼາຍປານໃດກໍຕາມ ເຮົາຈະບໍ່ເຂົ້າໃຈເລື່ອງຂອງພະເຈົ້າ. ເພາະເຫດນັ້ນ ຊາວອາແຖນທີ່ອາໄສແຕ່ປັນຍາຂອງມະນຸດຍັງບໍ່ເຂົ້າໃຈເລື່ອງຄວາມລອດຂອງພະເຈົ້າໄດ້.




ກ. ຮູບຂ້າງຂວາສະແດງເຖິງຫຍັງ? ____________________

ຂ. ຂ້າງຊ້າຍເດ? ____________________

ຄ. ເປັນຫຍັງຄົນທີ່ມີຄວາມຮູ້ສູງ ຮັບຟັງພະຄຳຂອງພະເຈົ້າຍາກ? ____________________

ງ. ຄຼິດສະຕຽນຄວນຫ້າມການສຶກສາບໍ່? ____________________

ຈ. ຖ້າເຮົາຈະສະແຫວງຫາພະປັນຍາຂອງພະເຈົ້າ ມີອັນໃດທີ່ຈຳເປັນ? ____________________

*ໃຫ້ຮ່ວມກັນອ່ານ ອຟຊ 1:16-20 ແລ້ວອ້ອນວອນເພື່ອຊຶ່ງກັນແລະກັນ ຂໍພະວິນຍານຊ່ວຍໃຫ້ຊອກຫາປັນຍາຂອງພະເຈົ້າ.*

*ແລ້ວເສັງ!*

ຄຳຕອບ:

**1** *ກ. ຊີລາແລະຕີໂມທຽວ ຂ. ໂກລິນໂທ ຄ. ມາເກໂດເນຍ*

**2** *ກ. ເຂົາຈາກໄປ ຂ. ເພິ່ນເດືອດຮ້ອນເຄືອງໃຈ*

**3** *ໂຕ້ຖຽງໃນໂຮງທຳແລະໃນບ່ອນປະຊຸມ*

**4** *ກ. ສະພາ ຂ. ບ່ອນປະຊຸມຊຶນ ຄ. ໂຮງທຳ*

**5** *ກ. ພະເຍຊູຄືນຈາກຕາຍ ຂ. ໂຮງທຳ ບ່ອນປະຊຸມຊຶນ ແລະ ສະພາ*

**6** *ກ. ເອປີກູລຽວ ແລະ ຊະໂຕອີໂກ ຂ. ໄດ້ສຶກສາຫຼາຍ*

**7** *ກ. ຢາກໄດ້ ຂ. ສົນໃຈສາສະໜາຫຼາຍກວ່າ ຄ. ບໍ່*

**8** *ກ. ຂໍ້ 18 ແລະ 19 ຂ. ຂໍ້ 22 ຄ. ຂໍ້ 23*

**9** *ກ. ຂໍ້ 24 ຂ. ຂໍ້ 25 ຄ. ຂໍ້ 26 ງ. ຂໍ້ 27 ຈ. ຂໍ້ 27 ສ. ຂໍ້ 28 ແລະ 29*
*ຊ. ຂໍ້ 29 ຍ. ຂໍ້ 30 ດ. ຂໍ້ 31 ຕ. ຂໍ້ 31*

**10** *(ບໍ່ມີຄຳຕອບຕາຍຕົວ ແຕ່ຄວນສຸພາບດີໂດຍນັບຖືຕຳແໜ່ງເຂົາ ແລະ ນອກນັ້ນກ່າວຢ່າງແຈ່ມໃສ)*

**11** *ກ. ເຍາະເຍີ້ຍ ຂ. "ພວກເຮົາຈະຄອຍຟັງທ່ານກ່າວເລື່ອງນີ້ອີກ" ຄ. ໄດ້ຮັບເຊື່ອ*

**12** *ກ. ຄົນທີ່ມີຖານະສູງ ຂ. ເລື່ອງໂງ່ ຄ. ພະເຈົ້າຈະທຳລາຍ (ເຮັດໃຫ້ສູນເສຍໄປ)*
*ງ. ຄົນທຳມະດາ ຈ. ຖືກອັບອາຍ ສ. ສິ່ງທີ່ມະນຸດເຫັນວ່າສຳຄັນ ຊ. ເອົາພະອົງເຈົ້າ*

**13** *ກ. ພະເຈົ້າ ຂ. ຄຳເທດສະໜາ ຄ. ໂງ່ ງ. ໂງ່*
*ຈ. ສະຫຼາດກວ່າປັນຍາຂອງມະນຸດ*

**14** *ກ. ສະໄໝນີ້ ຂ. ທີ່ເຊື່ອງໄວ້ ຄ. ກ່ອນປະຖົມມະການ*
*ງ. ພະປັນຍາຂອງພະເຈົ້າ ຈ. ສິ່ງທີ່ພະເຈົ້າໄດ້ຈັດແຈງໄວ້ສຳລັບຄົນທີ່ຮັກພະອົງ.*
*ສ. ທາງພະວິນຍານ*

**15** *ກ. ຄວາມຮູ້ຂອງມະນຸດ ຂ. ປັນຍາຂອງພະເຈົ້າ (ຄຳຄ້າຍຄືກໍໄດ້)*
*ຄ. (ບໍ່ມີຄຳຕອບທີ່ຖືກຕາຍຕົວ ແຕ່ອາດຈະຢູ່ກັບຄວາມຈອງຫອງຂອງເຂົາ ໆລໆ)*
*ງ. ບໍ່ຄວນຫ້າມ ແຕ່ຄວນຖືພະຄຳຂອງພະເຈົ້າກ່ອນ. (ຄຳຄ້າຍຄືກໍໄດ້)*
*ຈ. ຈຳເປັນມີພະວິນຍານຊ່ອຍ (ຄຳຄ້າຍຄືກໍໄດ້)*